# ຊົມເຊີຍຜົນສຳເລັດ
# ກອງປະຊຸມສາມັນຜູ້ຖືຮຸ້ນ ທຄຕລ ປະຈຳປີ 2022




ໃນວັນທີ 27 ເມສາ 2023 ທີ່ ໂຮງແຮມ ລາວພລາຊາ ນະຄອນຫຼວງວຽງຈັນ, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ໄດ້ຈັດກອງປະຊຸມສາມັນຜູ້ຖືຮຸ້ນ ທຄຕລ ປະຈຳປີ 2022 , ໂດຍການເປັນປະທານກອງປະຊຸມຂອງ ທ່ານ ຄຳສຸກ ສູນດາລາ ຮັກສາການປະທານສະພາບໍລິຫານ ທຄຕລ, ມີຜູ້ຖືຮຸ້ນເຂົ້າຮ່ວມດ້ວຍຕົນເອງຈຳນວນ 35 ທ່ານ, ຜູ້ມອບສິດຈຳນວນ 154 ທ່ານ ຊຶ່ງລວມຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມກອງປະຊຸມເທົ່າກັບ 158.143.510 ຮຸ້ນ, ນັບທັງ 21.822.227 ຮຸ້ນ ທີ່ຖືກມອບສິດ, ບັນລຸອັດຕາສ່ວນ 76,132% ຂອງຈຳນວນຮຸ້ນ ທຄຕລ ທັງໝົດ, ນອກນັ້ນ ຍັງມີຜູ້ຕາງໜ້າຈາກທະນາຄານແຫ່ງ ສປປ ລາວ, ຕະຫຼາດຫຼັກຊັບລາວ ແລະ ຄະນະກຳມະການຄຸ້ມຄອງຫຼັກຊັບ ເຂົ້າຮ່ວມຕິດຕາມກອງປະຊຸມອີກດ້ວຍ.

ກອງປະຊຸມໄດ້ດຳເນີນແຕ່ລະວາລະຢ່າງຄົບຖ້ວນ ພ້ອມທັງໄດ້ເປີດໂອກາດໃຫ້ແກ່ຜູ້ຖືຮຸ້ນສອບຖາມບັນດາຂໍ້ສົນໃຈຕ່າງໆ ແລະ ຄະນະບໍລິຫານ ທຄຕລ ກໍ່ໄດ້ມີການອະທິບາຍຊີ້ແຈງໃນແຕ່ລະບັນຫາຢ່າງກົງໄປກົງມາ ເຊິ່ງກອງປະຊຸມໄດ້ພິຈາລະນາຮັບຮອງບັນຫາສຳຄັນດັ່ງນີ້:

1. ຮັບຮອງເອົາບົດບັນທຶກກອງປະຊຸມຜູ້ຖືຮຸ້ນສະໄໝວິສາມັນ ຂອງ ທຄຕລ ປະຈຳປີ 2022 ຈັດຂຶ້ນໃນວັນທີ 22 ພະຈິກ 2022;
2. ຮັບຮອງບົດລາຍງານຜົນການດຳເນີນງານ ແລະ ເອກະສານລາຍງານການເງິນຂອງ ທຄຕລ ປະຈຳປີ 2022;
3. ຮັບຮອງການຈັດສັນກຳໄລ ປະຈຳປີ 2022 ແລະ ຮັບຮອງການຈ່າຍເງິນປັນຜົນ 100 ກີບ/ຮຸ້ນ, ໂດຍກຳນົດເອົາວັນທີ 12/05/2023 ເປັນມື້ຈ່າຍເງິນປັນຜົນ;

4. ຮັບຮອງເອົາແຜນການປີ 2023 ຂອງ ທຄຕລ;
5. ຮັບຮອງເອົາ ບໍລິສັດ PWC ເປັນຜູ້ດຳເນີນການກວດສອບເອກະສານລາຍງານການເງິນ ປະຈຳປີ 2023;
6. ຮັບຮອງການແຕ່ງຕັ້ງ ທ່ານ ບຸນປອນ ວັນນະຈິດ, ຮອງລັດຖະມົນຕີກະຊວງການເງິນ ເປັນປະທານສະພາບໍລິຫານ ທຄຕລ;




(ທ່ານ ບຸນປອນ ວັນນະຈິດ ຮອງລັດຖະມົນຕີກະຊວງການເງິນ, ປະທານສະພາບໍລິຫານ ທຄຕລ (ຜູ້ໃໝ່)




(ທ່ານ ຄຳສຸກ ສຸນດາລາ ຮັກສາການປະທານສະພາບໍລິຫານ ທຄຕລ, ປະທານກອງປະຊຸມ)




(ທ່ານ ນ. ສາຍສະໝອນ ຈັນທະຈັກ ຜູ້ອຳນວຍການ ທຄຕລ)

ໃນກອງປະຊຸມ ທ່ານ ນ. ສາຍສະໝອນ ຈັນທະຈັກ ຜູ້ອຳນວຍການ ທຄຕລ ກໍ່ໄດ້ກ່າວໃຫ້ຄວາມໝັ້ນໃຈຕໍ່ຜູ້ຖືຮຸ້ນ ທຄຕລ ວ່າ ຄະນະບໍລິຫານ ທຄຕລ ຈະພະຍາຍາມສູ້ຊົນແກ້ໄຂບັນຫາຄົງຄ້າງຕ່າງໆຂອງ ທຄຕລ, ຈະພະຍາຍາມສູ້ຊົນປະຕິບັດແຜນທຸລະກິດປະຈຳປີ 2023 ໃຫ້ບັນລຸເປົ້າໝາຍ ແລະ ສ້າງຜົນກຳໄລສູງສຸດ ເພື່ອຮັກສາຜົນປະໂຫຍດຂອງອົງກອນ ແລະ ຂອງຜູ້ຖືຮຸ້ນ. ກອງປະຊຸມໄດ້ດຳເນີນໄປຢ່າງມີຜົນສຳເລັດຢ່າງຈົບງາມ.

